## ມິຊຊາອາທິດທີ 4 ກຳນົດບຳເພັນສິນ
## ວັນທີ 27 ມີນາ 2022



**ພຣະວໍລະສານໂດຍນັກບຸນລູກາ 15, 1-3, 11-32**

ໃນເວລານັ້ນ, ພວກເກັບພາສີແລະຄົນບາບທັງຫລາຍເຂົ້າມາຟັງພຣະເຢຊູເຈົ້າເທດສະໜາສັ່ງສອນ. ພວກຟາຣີເຊວແລະພວກນັກປາດພຣະຄຳພີຈຶ່ງພາກັນຈົ່ມວ່າ: ຄົນຜູ້ນີ້ເຂົ້າໝູ່ກັບພວກຄົນບາບແລະຮ່ວມຊຸມແຊວກັບພວກເຂົາ. ພຣະອົງຊົງກ່າວຄວາມປຽບທຽບນີ້ໃຫ້ພວກເຂົາຟັງວ່າ: ຍັງມີຄົນຜູ້ໜຶ່ງມີລູກສອງຄົນ, ຜູ້ນ້ອງໄດ້ເວົ້າກັບພໍ່ວ່າ: ພໍ່ເອີຍ! ມູນມໍລະດົກທີ່ເປັນສ່ວນຂອງລູກນັ້ນ, ຂໍພໍ່ຈົ່ງມອບໃຫ້ລູກເສຍ. ພໍ່ກໍເລີຍປັນມໍລະດົກນັ້ນໃຫ້. ສອງສາມວັນຕໍ່ມາ, ເມື່ອໄດ້ທ້ອນເອົາຊັບສົມບັດໝົດແລ້ວ ຜູ້ເປັນນ້ອງກໍອອກເດີນທາງໄປຍັງປະເທດອື່ນເມືອງໄກ. ແລະຢູ່ນັ້ນ, ເຂົາໄດ້ປະພຶດຕົນເປັນຄົນຊົ່ວ ລ້າງຜານເງິນແລະເຄື່ອງຂອງໝົດກ້ຽງ. ເມື່ອເຂົາຜານເງິນໝົດແລ້ວ, ບັງເອີນເກີດການແຫ້ງແລ້ງຢ່າງໃຫຍ່ໃນປະເທດນັ້ນ, ຊາຍຜູ້ນັ້ນຈຶ່ງຕ້ອງອຶດຢາກໝາກແຄ້ນ. ເຂົາຈຶ່ງໄປຮັບຈ້າງຢູ່ກັບຄົນຜູ້ໜຶ່ງໃນເມືອງນັ້ນ. ເຈົ້າຂອງເຮືອນໃຊ້ເຂົາໄປລ້ຽງໝູໃນນາຂອງລາວ. ເຂົາຫິວຫລາຍຈົນວ່າເກືອບຈະຍາດກິນນຳໝູ ແຕ່ບໍ່ມີໃຜເອົາໃຫ້.

ເຂົາຈຶ່ງຫວນຄິດໄດ້ວ່າ: ລູກຈ້າງໃນເຮືອນພໍ່ຂອງຂ້ອຍ ກໍຍັງມີເຂົ້າເຫລືອກິນ. ສ່ວນຂ້ອຍມາອຶດຈ່ອງຢູ່ນີ້ຢ່າງແສນສາຫັດ. ຂ້ອຍຈະລຸກຂຶ້ນໄປຫາພໍ່, ຈະເວົ້ານຳເພິ່ນວ່າ: ພໍ່ເອີຍ! ລູກໄດ້ທຳຜິດຕໍ່ສະຫວັນແລະຕໍ່ພໍ່ແລ້ວ! ລູກນີ້ບໍ່ສົມຊື່ວ່າເປັນລູກຂອງພໍ່ອີກ, ໃຫ້ພໍ່ຖືເອົາລູກເປັນຄືລູກຈ້າງຂອງພໍ່ຜູ້ໜຶ່ງເຖີດ. ເຂົາຈຶ່ງລຸກຂຶ້ນໄປຫາພໍ່, ເມື່ອເຂົາຍັງຢູ່ແຕ່ໄກ, ພໍ່ຫລຽວເຫັນກໍຮູ້ສຶກມີຄວາມສົງສານ ຈຶ່ງແລ່ນໄປກອດອຸ້ມເອົາ. ເຂົາຈຶ່ງເວົ້າກັບພໍ່ວ່າ: ພໍ່ເອີຍ! ລູກໄດ້ທຳຜິດຕໍ່ສະຫວັນແລະຕໍ່ພໍ່ແລ້ວ, ລູກບໍ່ສົມຊື່ວ່າເປັນລູກຂອງພໍ່ອີກ. ຝ່າຍພໍ່ຈຶ່ງເວົ້າກັບຄົນໃຊ້ວ່າ: ໄປໄວໆ, ໄປເອົາເສື້ອຜືນງາມໆມາໃຫ້ລູກເຮົາ, ເອົາແຫວນແລະເກີບມາໃສ່ໃຫ້ດ້ວຍ. ໄປຈັບເອົາງົວໂຕພີໆມາຂ້າ ພວກເຮົາຈະທຳບຸນກິນລ້ຽງຢ່າງມ່ວນຊື່ນ. ຍ້ອນວ່າລູກຂອງເຮົາຜູ້ຕາຍໄປແລ້ວ ໄດ້ກັບຄືນມາ. ເຂົາໄດ້ຫັບຫາຍໄປ ແລະໄດ້ກັບຄືນມາພົບພໍ້ກັນອີກ. ແລ້ວງານສະຫລອງກໍເລີ່ມຕົ້ນຂຶ້ນ.

ຝ່າຍລູກກົກທີ່ຢູ່ນາ, ເມື່ອກັບມາໃກ້ຈະຮອດເຮືອນກໍໄດ້ຍິນສຽງຂອງເຄື່ອງດົນຕີຮ້ອງລຳທຳເພງ, ຈຶ່ງເອີ້ນເອົາຄົນໃຊ້ຜູ້ໜຶ່ງມາຖາມຫາເລື່ອງລາວ. ຄົນໃຊ້ຕອບວ່າ: ນ້ອງຊາຍຂອງເຈົ້າກັບມາແລ້ວ ແລະຍາພໍ່ໄດ້ຂ້າງົວໂຕພີໆກິນລ້ຽງສະຫລອງ ຍ້ອນໄດ້ເຫັນລາວກັບມາເຮືອນໂດຍປອດໄພທຸກປະການ.

ຝ່າຍອ້າຍກົກຄິດຄຽດຢາກຮ້າຍເລີຍບໍ່ຍອມຂຶ້ນເຮືອນ, ພໍ່ຈຶ່ງລົງໄປເອີ້ນ. ແຕ່ເຂົາໄດ້ຕອບພໍ່ວ່າ: ລູກໄດ້ຮັບໃຊ້ພໍ່ໄດ້ຫລາຍຟ້າຫລາຍປີມາແລ້ວ ລູກບໍ່ເຄີຍໄດ້ຂັດຂືນຄຳສັ່ງອັນໃດຂອງພໍ່ ແລະພໍ່ບໍ່ເຄີຍເອົາແກະໃຫ້ລູກຂ້າກິນລ້ຽງກິນຊຸມກັບໝູ່ຂອງລູກຈັກເທື່ອ. ແຕ່ບັດນີ້, ລູກຂອງເຈົ້າຜູ້ນີ້ ທີ່ໄດ້ຜານຊັບສິນຂອງເຈົ້າໝົດກ້ຽງກັບແມ່ຈ້າງນາງເລງ, ມັນກັບຕ່າວມາ ເຈົ້າກໍຍັງໄດ້ຂ້າງົວຕົວພີໆທຳບຸນສະຫລອງມັນອີກ.

ພໍ່ຕອບວ່າ: ລູກເອີຍ! ລູກເຄີຍຢູ່ກັບພໍ່ສະເໝີມາ, ທຸກສິ່ງທີ່ພໍ່ມີກໍເປັນຂອງລູກ. ຈຳເປັນແລ້ວທີ່ເຮົາຕ້ອງເຮັດບຸນສະຫລອງ ຍ້ອນວ່ານ້ອງຊາຍຂອງເຈົ້າທີ່ຕາຍໄປແລ້ວ ໄດ້ກັບຄືນມາ, ມັນໄດ້ຫັບຫາຍໄປ ແລະກັບຄືນມາພົບພໍ້ກັນອີກ. ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ຍິ່ງພວກເຮົາກ້າວເດີນແຕ່ລະວັນ, ແຕ່ລະອາທິດໃນກຳນົດບຳເພັນ, ຍິ່ງພວກເຮົາສຳພັດໄດ້ເຖິງຄວາມຮັກແລະຄວາມປາດຖະໜາຂອງພຣະເຢຊູເຈົ້າໃຫ້ພວກເຮົາກັບມາຄືນດີກັບພຣະອົງ. ເພື່ອພວກເຮົາຈະໄດ້ຢູ່ໃນອ້ອມກອດແຫ່ງຄວາມຮັກ, ຢູ່ໃນເຮືອນຂອງພຣະອົງ.

ດັ່ງລູກຊາຍລ້າງຜານໃນພຣະວໍລະສານວັນນີ້, ເຖິງວ່າເຂົາຈະເປັນຄົນບໍ່ດີປານໃດກໍຕາມ, ລ້າງຜານຊັບສິນພໍ່ຂອງເຂົາແນວໃດກໍຕາມ, ແຕ່ເມື່ອເຂົາຄິດໄດ້ແລະກັບຄືນມາ, ຜູ້ເປັນພໍ່ກໍຍິນດີແລະພ້ອມທີ່ຈະໃຫ້ອະໄພສະເໝີ. ຍ້ອນຫຍັງ? ຍ້ອນບໍ່ມີພໍ່ຄົນໃດຢາກໃຫ້ລູກຂອງຕົນຕ້ອງສູນເສຍຊີວິດໄປ. ຍ້ອນບໍ່ມີພໍ່ຄົນໃດຢາກເຫັນລູກຂອງຕົນຕ້ອງຢູ່ໃນຄວາມທຸກຍາກລຳບາກ. ຍ້ອນບໍ່ມີພໍ່ຄົນໃດຢາກຢູ່ຫ່າງໄກລູກຂອງຕົນ. ສ່ວນຜູ້ເປັນລູກລ້າງຜານ, ທ້າຍສຸດ, ເຂົາກໍຄິດໄດ້ວ່າຄວາມສຸກທີ່ແທ້ຈິງແລະຍິ່ງໃຫຍ່ທີ່ສຸດຂອງເຂົາແມ່ນການໄດ້ຢູ່ໃນເຮືອນພໍ່ຂອງເຂົາ. ແມ່ນແຕ່ຄົນໃຊ້ໃນເຮືອນພໍ່ຂອງເຂົາກໍຍັງມີຄວາມສຸກກວ່າຄົນທີ່ອາໄສຢູ່ບ່ອນອື່ນ. ຮູບພາບແຫ່ງເຮືອນຂອງພໍ່ຜູ້ໃຈດີໃນເລື່ອງລູກລ້າງຜານນີ້ແມ່ນຮູບພາບແຫ່ງອານາຈັກສະຫວັນນັ້ນເອງ. ພຣະບິດາຂອງພວກເຮົາກໍບໍ່ຢາກໃຫ້ຜູ້ໃດຕ້ອງຫ່າງໄກແລະຕັດຂາດຈາກພຣະອົງເລີຍ. ພຣະອົງພ້ອມທີ່ຈະລໍຖ້າພວກເຮົາແຕ່ລະຄົນກັບມາຄືນດີແລະເຂົ້າໃນອານາຈັກສະຫວັນຮ່ວມກັບພຣະອົງ.

ນີ້ແລແມ່ນຄວາມໝາຍຂອງກຳນົດບຳເພັນສິນ. ອັນແມ່ນຊ່ວງເວລາແຫ່ງການຄືນດີ, ແຫ່ງການກັບຄືນມາຫາຄວາມຮັກຂອງພຣະເຈົ້າເພື່ອຢູ່ນຳພຣະອົງ. ແຕ່ສິ່ງນີ້ຈະເປັນໄປໄດ້ກໍຕໍ່ເມື່ອພວກເຮົາລຸກຂຶ້ນຈາກສິ່ງທີ່ບໍ່ດີ, ຈາກຫົນທາງທີ່ບໍ່ຖືກຕ້ອງເພື່ອຜັນປ່ຽນທິດທາງແລະກັບຄືນມາຫາຄວາມຮັກແລະການໃຫ້ອະໄພຂອງພຣະເຈົ້າພຣະບິດາຂອງພວກເຮົາ. ເຖິງວ່າບາບຜິດຂອງພວກເຮົາຈະໜັກໜ່ວງພຽງໃດກໍຕາມ, ຄວາມຮັກແລະການໃຫ້ອະໄພຂອງພຣະເຈົ້າກໍຍັງຍິ່ງໃຫຍ່ກວ່າບາບຂອງພວກເຮົາອີກຊໍ້າ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກສຳນຶກຜິດແລະກັບຕ່າວຄືນມາຫາພຣະອົງຜູ້ເຕັມພຽບດ້ວຍຄວາມຮັກແລະການໃຫ້ອະໄພ. ເພື່ອລູກຈະໄດ້ຄືນດີແລະຢູ່ກັບພຣະອົງໃນອານາຈັກສະຫວັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ